ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສະຖານເອກອັກຄະລັດຖະທູດ

ແຫ່ງ ສປປ ລາວ ທີ່ ບຣຸກແຊນ

# ແຈ້ງການ

ສະຖານເອກອັກຄະລັດຖະທູດ ແຫ່ງ ສປປ ລາວ ປະຈຳບຣຸກແຊນ, ປະເທດແບນຊິກ ຂໍຖືເປັນກຽດແຈ້ງມາຍັງພີ່ນ້ອງຊາວລາວຢູ່ຕ່າງປະເທດຊາບວ່າ ໂດຍອີງຕາມແຈ້ງການຂອງຄະນະເລຂາທິການລັດຖະບານສະບັບເລກທີ 3099/ຄລບ, ລົງວັນທີ 05 ພະຈິກ 2010, ລັດຖະບານໄດ້ຕົກລົງຍົກເວັ້ນຄ່າວິຊາໄລຍະສັ້ນ(NI-B3) ເຂົ້າສປປ ລາວ ແລະ ຍົກເວັ້ນຄ່າທຳນຽມຕໍ່ກຳນົດໄລຍະເວລາພັກເຊົາໃຫ້ແກ່ຄົນເຊື້ອຊາດລາວຢູ່ຕ່າງປະເທດ ນັບແຕ່ວັນທີ 01 ມັງກອນ 2011 ເປັນຕົ້ນໄປ, ຊຶ່ງມີລາຍລະອຽດດັ່ງລຸ່ມນີ້:

1. ຍົກເວັ້ນຄ່າທຳນຽມວິຊາໃຫ້ຄົນເຊື້ອຊາດລາວຢູ່ຕ່າງປະເທດທີ່ນອນຢູ່ໃນກໍລະນີ ດັ່ງນີ້: ຜູ້ທີ່ມີອາຍຸແຕ່ 65 ປີຂຶ້ນໄປ, ຜູ້ທີ່ມີອາຍຸຕໍ່າກວ່າ 15 ປີ, ຜູ້ທີ່ເປັນນັກບວດ, ຜູ້ທີ່ເສຍຈິດ ແລະ ຜູ້ທີ່ເສຍອົງຄະ ຊຶ່ງຂໍວິຊາໄລຍະສັ້ນ (NI-B3) ເຂົ້າສປປ ລາວ ຢູ່ສະຖານເອກອັກຄະລັດຖະທູດ, ສະຖານກົງສູນໃຫຍ່ແຫ່ງ ສປປ ລາວ ທີ່ຕ່າງປະເທດ ແລະ ຢູ່ໜ່ວຍງານວິຊາກັບດ່ານສາກົນໃນຂອບເຂດທົ່ວປະເທດ ແລະ ຈະໄດ້ຮັບອະນຸຍາດໃຫ້ພັກເຊົາຢູ່ ສປປ ລາວພາຍໃນ 90 ວັນ, ເມື່ອບຸກຄົນດັ່ງກ່າວສະເໜີຂໍຕໍ່ກໍ່ຈະໄດ້ຮັບການຍົກເວັ້ນຄ່າທຳນຽມເຊັ່ນດຽວກັນ.

2. ຍົກເວັ້ນຄ່າທຳນຽມໃຫ້ຄົນເຊື້ອຊາດລາວຢູ່ຕ່າງປະເທດ ທີ່ບໍ່ໄດ້ກຳນົດໄວ້ໃນຂໍ້ທີ 1 ຂ້າງເທິງ ທີ່ຂໍວິຊາໄລຍະສັ້ນ (NI-B3) ເຂົ້າ ສປປ ລາວ ຢູ່ສະຖານເອກອັກຄະລັດຖະທູດ ແລະ ສະຖານກົງສູນໃຫຍ່ແຫ່ງ ສປປ ລາວ ທີ່ຕ່າງປະເທດ ທີ່ມີຈຸດປະສົງພັກເຊົາຢູ່ ສປປ ລາວ ພາຍໃນ 60 ວັນ, ເມື່ອບຸກຄົນດັ່ງກ່າວສະເໜີຂໍຕໍ່ກໍຈະໄດ້ຮັບການຍົກເວັ້ນຄ່າທຳນຽມເຊັ່ນດຽວກັນ. ໃນກໍລະນີບຸກຄົນທີ່ກຳນົດໄວ້ໃນຂໍ້ 2 ນີ້ ຫາກຂໍວິຊາໄລຍະສັ້ນ (NI-B3) ເຂົ້າ ສປປ ລາວ ຢູ່ໜ່ວຍງານວິຊາກັບດ່ານສາກົນໃນຂອບເຂດທົ່ວປະເທດ ຈະຕ້ອງໄດ້ເສຍຄ່າທຳນຽມຕາມລະບຽບຫຼັກການ ແລະ ເມື່ອບຸກຄົນດັ່ງກ່າວສະເໜີຂໍຕໍ່ກຳນົດໄລຍະເວລາພັກເຊົາແມ່ນເສຍຄ່າທຳນຽມ 1 ໂດລາສະຫະລັດ/ຄົນ/ມື້ (ປະຈຸບັນ 2 ໂດລາສະຫະລັດ/ຄົນ/ມື້).

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງພີ່ນ້ອງເຊື້ອຊາດລາວທີ່ຕ່າງປະເທດຊາບໂດຍທົ່ວເຖິງກັນ.

ບຣຸກແຊນ, ວັນທີ 01 ມັງກອນ 2011

ເອກອັກຄະລັດຖະທູດ

ສຸທຳ ສາກົນນິຍົມ